ສະບັບທີ 2, ເດືອນ ມິຖຸນາ 2008

# ຂ່າວປະຊາສຳພັນກ່ຽວກັບແຮງງານເຄື່ອນຍ້າຍ

**ກົດໝາຍການເຮັດວຽກຂອງຄົນຕ່າງດ້າວ ປະກາດໃຊ້ແລ້ວ**!!! ພະຕິຕິກລົງກ່ຽວກັບການເຮັດວຽກຂອງຄົນຕ່າງດ້າວ ປີ 2008 ນຳໃຊ້ໄດ້ ແລ້ວ ເມື່ອວັນທີ 23 ກຸມພາ 2008 ຂະນະນີ້ກະຊວງແຮງງານກຳລັງວາງກົດລະບຽບຂອງກະຊວງ ລະບຽບຂອງ ກົມ ຄຳສັ່ງ ແຈ້ງການຕ່າງໆ ເພື່ອ ກຳນົດ ແນວທາງ ການດຳເນີນການຕ່າງໆໃຫ້ເປັນໄປຕາມ ພະຕິຕິກລົງສະບັບນີ້

ຖາມ : ກົດໝາຍສະບັບໃໝ່ນີ້ຈະມີຜົນແນວໃດກັບແຮງງານເຄື່ອນຍ້າຍ ຫຼື ຜູ້ລັກເຂົ້າເມືອງຜິດກົດໝາຍ 3 ສັນຊາດ ຄົນພະມ້າ, ລາວ ແລະ ກຳປູເຈຍ ທີ່ໄດ້ຮັບການ ໂຍະຍານໃຫ້ອາໃສຢູ່ໃນປະເທດໄທ ແລະ ເພື່ອລໍຖ້າສົ່ງກັບບ້ານ

ຕອບ : ກົດໝາຍສະບັບນີ້ມີຜົນຕໍ່ແຮງງານ ແລະ ນາຍຈ້າງ ດັ່ງຕໍ່ໄປນີ້:

- **ນາຍຈ້າງເສຍຄ່າທຳນຽມການຈ້າງ (levy)** ເພື່ອຫຼຸດຜ່ອນຈຳນວນຄົນຕ່າງດ້າວທີ່ບໍ່ແມ່ນຊ່າງທີ່ມີຝີມື ຫຼື ຜູ້ຊຳນານ ທີ່ເຂົ້າມາເຮັດວຽກ ຢູ່ປະເທດໄທ, ນາຍຈ້າງ ຕ້ອງເສຍຄ່າທຳນຽມການຈ້າງແຮງງານທີ່ບໍ່ແມ່ນຊ່າງທີ່ມີຝີມື ຫຼື ຜູ້ຊຳນານ. ດັ່ງນັ້ນນາຍຈ້າງ ຕ້ອງແຈ້ງຕໍ່ ພະນັກງານທະບຽນ ແລະ ຈ່າຍຄ່າທຳນຽມກ່ອນເຮັດສັນຍາຈ້າງ ບໍ່ຕ່ຳກວ່າ 3 ວັນເຂົ້າການ, ຖ້າບໍ່ດັ່ງນັ້ ຈະໄດ້ເສຍເງິນເພີ່ມອີກນຶ່ງເທົ່າ ຂອງ ຄ່າທຳນຽມທີ່ຕ້ອງຈ່າຍ ສ່ວນອັດຕາຄ່າທຳນຽມການຈ້າງຈະແບບແຍກຕາມປະເພດກິດ ຈະກຳ/ສະຖານທີ່ ປະກອບກິດຈະກຳໃນແຕ່ລະແຂວງນຳ

- **ນາຍຈ້າງສາມາດຈ້າງແຮງງານຕ່າງດ້າວແບບໄປກັບ ຫຼື ເຮັດວຽກຕາມລະດູການ** ເພື່ອພັດທະນາເສດຖະກິດຊາຍແດນ ແຮງງານ ຄົນພະມ້າ ລາວ ກຳປູເຈຍ ສາມາດໃຊ້ເອກະສານແທນໜັງສືເດີນທາງ ເພື່ອຂໍອະນຸຍາດເຮັດວຽກໃນລັກສະນະໄປກັບ ຫຼື ວຽກຕາມລະດູການ ພາຍໃນ ທ້ອງຖິ່ນທີ່ຕິດກັບຊາຍແດນ ຫຼື ທ້ອງຖິ່ນ ທີ່ຕໍ່ ເນື່ອງກັບຊາຍແດນ ລາຍລະອຽດໃນການຂໍອະນຸຍາດເຮັດວຽກ ຈະມີກົດໝາຍ ຂອງກະຊວງ ອອກມາກຳນົດ

- **ແຮງງານມີໜ້າທີ່ນສົ່ງເງິນກອງທຶນເພື່ອການສົ່ງຄົນຕ່າງດ້າວກັບອອກຈາກປະເທດໄທ** ກົດໝາຍໄດ້ກຳນົດໃຫ້ຈັດຕັ້ງກອງທຶນເພື່ອການສົ່ງຄົນຕ່າງດ້າວກັບອອກ ນອກປະເທດ ເພື່ອເປັນຄ່າໃຊ້ຈ່າຍໃນການສົ່ງລູກຈ້າງເຊິ່ງເປັນຄົນຕ່າງດ້າວ ອອກຈາກປະເທດໄທ ຫຼັງຈາກໄລຍະເວລາທີ່ນໄດ້ຮັບການໂຍະຍານໃຫ້ຢູ່ ແລະເຮັດວຽກເປັນ ການຊົ່ວຄາວໝົດກຳນົດແລ້ວ ດັ່ງນັ້ນ ລູກຈ້າງ ເຊິ່ງເປັນ ຄົນຕ່າງດ້າວຕ້ອງສົ່ງເງິນເຂົ້າກອງທຶ ນີ້ໂດຍນາຍຈ້າງຈະເປັນຜູ້ຫັກເງິນຈາກລູກຈ້າງ ເພື່ອສົ່ງເງິນເຂົ້າກອງທຶນ ເຊິ່ງຈະມີກົດລະບຽບ ຂອງ ກະຊວງອອກມາ ຫຼັກການວິທີການ ກຳນົດເວລາ ແລະອັດຕາເງິນທີ່ຈະຕ້ອງຫັກເຂົ້າກອງທຶນ

  - ຫາກລູກຈ້າງສົ່ງເງິນເຂົ້າກອງທຶນຈົນ ຄົບ ແລະ ອອກໄປອອກປະເທດໄທ ໂດຍຄ່າໃຊ້ຈ່າຍຂອງຕົນເອງ ລູກຈ້າງສາມາດ ຍື່ນຄຳຮ້ອງຂໍຮັບເງິນ ຄືນໄດ້ທີ່ດ່ານ ກວດຄົນເຂົ້າເມືອງ ແລະກຳນົດໃຫ້ພະນັກງານທະບຽນ ຕ້ອງສົ່ງເງິນຄືນ ພາຍໃນ 30 ວັນນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ ຫຼື ໜັງສືແຈ້ງຂໍຮັບເງິນຄືນ ຖ້າຫາກບໍ່ທັນຕາມກຳນົດ ພະນັກງານທະບຽນ ຕ້ອງສົ່ງເງິນຄືນ ພ້ອມທັງຈ່າຍດອກເບ້ຍ 7.5 ເປີເຊັນຕໍ່ປີ. ເຖິງຢ່າງໃດກໍ່ຕາມ ຫາກລູກຈ້າງ ອອກຈາກປະເທດໄທໄປແລ້ວ ໂດຍໃຊ້ເງິນ ຂອງຕົນ ເອງ ແຕ່ຍັງບໍ່ທັນໄດ້ຂໍເງິນຄືນ ຢູ່ດ່ານກວດຄົນເຂົ້າເມືອງ ກໍ່ມີສິດຂໍຮັບເງິນທີ່ຫັກໄວ້ຄືນ ພາຍໃນ 2 ປີ, ບໍ່ດັ່ງນັ້ນ ເງິນທີ່ຫັກໄວ້ຈະຕົກເປັນເງິນຂອງກອງທຶນ

  - ຫາກລູກຈ້າງສົ່ງເງິນບໍ່ຄົບຕາມຈຳນວນ ນາຍຈ້າງຈະຕ້ອງຮັບຜິດຊອບຈ່າຍເງິນເຂົ້າກອງທຶນ ຈົນຄົບຕາມກຳນົດໄລຍະເວລາ ທີ່ໃຫ້ສົ່ງເງິນ

- **ແຮງງານຈະໄດ້ຮັບອະນຸຍາດເຮັດວຽກໄດ້ໄລຍະບໃຫ້ກາຍ 2 ປີ ຕໍ່ ຄັ້ງ** ເພື່ອໃຫ້ຄົນຕ່າງດ້າວເຮັດວຽກໃຫ້ສອດຄ່ອງກັບສະພາບ ການຈ້າງງານ ຈຶ່ງໄດ້ກຳນົດ ໃຫ້ໃບອະນຸຍາດເຮັດວຽກມີອາຍຸບໍ່ກາຍ 2 ປີ ແລະ ຈະໄດ້ຮັບ ອະນຸຍາດໃຫ້ເຮັດວຽກທັງໝົດບໍ່ໃຫ້ກາຍ 4 ປີ ຍົກເວັ້ນ ແຕ່ມີຄະນະ ລັດຖະມົນຕີກຳນົດ ໃຫ້ເປັນແບບອື່ນ ດັ່ງນັ້ນຫາກແຮງງານຕ່າງດ້າວ ທີ່ເຂົ້າເມືອງ ຖືກກົດໝາຍ (ຕາມ MOU) ຫຼື ຜ່ານການພິສູດສັນຊາດແລ້ວ ອອກຈາກປະເທດໄທ ຈະກັບຄືນມາໃໝ່ ໃນເວລາທີ່ໃບອະນຸຍາດ ເຮັດວຽກ ຍັງບໍ່ໝົດອາຍຸ ກໍ່ສາມາດເຮັດວຽກໄດ້ຕໍ່ ຕາມໄລຍະ ເວລາ ທີ່ເຫຼືອໃນໃບອະນຸຍາດເຮັດວຽກ

- **ແຮງງານສາມາດປ່ຽນວຽກ ນາຍຈ້າງ ແລະ ສະຖານທີ່ເຮັດວຽກໄດ້** ເພື່ອເຮັດໃຫ້ການເຮັດວຽກ ຂອງຄົນຕ່າງດ້າວ ເກີດຄວາມ ໂຍະຍານ ລວມທັງຄວບຄຸມການ ເຮັດວຽກໃຫ້ມີປະສິດທິພາບ ແລະສອດຄ່ອງກັບສະພາບຄວາມເປັນຈິງ ເພື່ອໃຫ້ເປັນ ໄປຕາມຫຼັກການ ແລະວິທີການ ຂອງກົດລະບຽບຂອງກະຊວງ

ຄຳຖາມ : ແມ່ນຫຼື ບໍ່ ທີ່ກົດໝາຍສະບັບນີ້ ໃຫສິດແກ່ ພະນັກງານ ແລະ ເຈົ້າໜ້າທີ່ ສາມາດຈັບກຸມແຮງງານທີ່ເຮັດວຽກໂດຍບໍ່ມີໃບອະນຸຍາດໄດ້ ໂດຍບໍ່ຕ້ອງມີໝາຍຈັບ

ຄຳຕອບ : ແມ່ນແລ້ວ ພະນັກງານ ຫຼື ເຈົ້າໜ້າທີ່ ພົບເຫັນແຮງງານເຮັດວຽກໂດຍບໍ່ມີໃບອະນະຍາດເຮັດວຽກ ແລະສັ່ງໃຫ້ ໄປລາຍງານໂຕ ຢູ່ສະຖານີຕຳຫຼວດ ກັບພະນັກ ງານກ່ຽວຂ້ອງ ຫາກຄົນຕ່າງດ້າວ ບໍ່ຍິນຍອມ ຫຼື ຈະຫຼົບໜີ ໃນກໍລະນີນີ້ ພະນັກງານກ່ຽວຂ້ອງ ສາມາດຈັບຄົນຕ່າງດ້າວໄດ້ ໂດຍບໍ່ຕ້ອງມີໝາຍຈັບ ແລະ ສາມາດນຳໂຕຜູ້ ຖືກຈັບ ສົ່ງໃຫ້ພະນັກງານສືບສວນໂດຍທັນທີນ ອກຈາກນີ້ ຫາກພະນັກງານຫາກສົງໃສວ່າ ມີການຈ້າງແຮງງານ ໂດຍບໍ່ຖືກກົດໝາຍ ພະນັກງານສາມາດເຂົ້າໄປກວດສອບ ໄດ້ທຸກເວລາ ທັງກາງເວັນແລະ ກາງຄືນໂດຍບໍ່ຕ້ອງມີໝາຍຈາກສານ

- **ຂໍ້ກຳນົດການລົງໂທດ ນາຍຈ້າງ / ຄົນຕ່າງດ້າວ**

  - ນາຍຈ້າງທີ່ຮັບຄົນຕ່າງດ້າວເຮັດວຽກໂດຍບໍ່ມີໃບອະນຸຍາດເຮັດວຽກ ມີໂທດ ປັບໄໝ ຕັ້ງແຕ່ 10,000 ເຖິງ 100,000 ບາດ ຕໍ່ຄົນຕ່າງດ້າວ 1 ຄົນ

  - ແຮງງານທີ່ເຮັດວຽກໂດຍບໍ່ໄດ້ຮັບນະຍຸຍາດ ຖືກຈັບຂັງຄຸກ ບໍ່ເກີ 5 ປີ ຫຼື ປັບໄໝຕັ້ງແຕ່ 2,000 ເຖິງ 100,000 ບາດ ຫຼື ທັງຖືກກັກຂັງ ແລະ ທັງຖືກປັບໄໝ, ແຕ່ເຖິງຢ່າງໃດກໍ່ຕາມ ຫາກມີການຍິນຍອມອອກຈາກປະເທດໄທ ໃນເວລາທີ່ກຳນົດໄວ້ (30 ວັນ) ແຮງງານຈະໄດ້ການພົ້ນໂທດກັກຂັງ ຫຼື ພຽງແຕ່ມີໂທດປັບໄໝເທົ່ານັ້ນ



Photographs by : SHIELD project



ທ່ານສາມາດສົ່ງຄຳຄິດຄຳເຫັນ ຂອງທ່ານ ກ່ຽວກັບ ຂ່າວສານນີ້ ໄດ້ທີ່ ອົງການເພື່ອການຍົກຍ້າຍຖິ່ນຖານ ສາກົນ ຊັ້ນ 18 ອາຄານ ຂ່າວສານ ສຳລັບແຮງງານເຄື່ອນຍ້າຍຖິ່ນຖານ ເຜີຍແຜ່ໂດຍ ພະແນກແຮງງານ ເຄື່ອນຍ້າຍຖິ່ນຖານ ຂອງ IOM ຕຶກ ລາດຈະນະກາ 183 ຊັ້ນທີ 18, ສາທອນ, ບາງກອກ 10120
ໂທ : 023439300 ແຟກxax: 023439399 ອີເມລ: migrantnews@iom.iom.int